ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈໍາ ເລກທີ 26 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 24 / 04 / 20

# ມະຕິ

## ຂອງ ຄະນະປະຈໍາສະພາແຫ່ງຊາດ

## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ວ່າດ້ວຍ ການໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານກົດໝາຍໃນບັນຫາອາຍາ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ

--------------------------

- ອີງຕາມ ລັດຖະທໍາມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015, ມາດຕາ 56 ຂໍ້ 6 ກ່ຽວກັບສິດ ແລະ ໜ້າທີ່ ຂອງ ຄະນະປະຈໍາສະພາແຫ່ງຊາດ ໃນການຕົກລົງໃຫ້ສັດຕະຍາບັນແກ່ ສົນທິສັນຍາ ແລະ ສັນຍາສາກົນ ຕາມການສະເໜີຂອງ ທ່ານ ນາຍົກລັດຖະມົນຕີ.
- ອີງຕາມ ໜັງສືສະເໜີຂອງ ທ່ານ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 31/ນຍ, ລົງວັນທີ 06 ເມສາ 2020.
- ອີງຕາມ ການຕົກລົງຂອງ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ຄັ້ງວັນທີ 24 ເມສາ 2020.

**ຄະນະປະຈໍາສະພາແຫ່ງຊາດຕົກລົງ:**

**ມາດຕາ 1** ເຫັນດີໃຫ້ສັດຕະຍາບັນແກ່ ສົນທິສັນຍາ ວ່າດ້ວຍ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານກົດໝາຍໃນບັນຫາອາຍາ ລະຫວ່າງ ລັດຖະບານ ສປປ ລາວ ແລະ ລັດຖະບານ ສສ.ຫວຽດນາມ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຄະນະປະຈໍາສະພາແຫ່ງຊາດ
ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານ

ປານີ ຢາທໍ່ຕູ້